# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ຢາພັງພອນ



ຂຽນໂດຍ: ອາຈານ ເກດ

ຂໍ້ມູນຈາກ: ບ້ານທ້ອມ ເມືອງ ຫາດຊາຍຟອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ຢາພັງພອນ

(ສະບັບທົດລອງ)

ຮຽບໂຮມແລະຈັດໜ້າໂດຍ: ນາງ ຈັນທະຈອນ ຊຸມພົນພັກດີ

ແຕ້ມໂດຍ: ທ້າວ ສິດປະກອນ ທົງອານາດ

ຮຽບຮຽງໂດຍ: ອ ຈ ໂພໄຊຈັນທະວົງສ

ອ.ຈ ເກດມະນີ ບັນດາລັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ ສິລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການສູນອົບຮົມຮ່ວມພັດທະນາ.

ປື້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປື້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ຢາພັງຟອນເປັນພືດຊະນິດໜຶ່ງ.ທີ່ເກີດມາຈາກທຳມະຊາດລັກສະນະຂອງພືດຊະນິດນີ້ມີລຳຕົ້ນສີຂຽວ ເກີດແຜ່ເປັນກຸ່ມເປັນກໍມີໃບສີຂຽວປາຍແຫຼມ ຢາພັງຟອນຖືກນຳມາໃຊ້ເຂົ້າໃນການແພດພື້ນບ້ານແຕ່ຮຸ່ນປູ່ຍາຕາຍາຍຂອງພວກເຮົາແຕ່ດົນນານແລ້ວ ຈົນມາຮອດປັດຈຸບັນນີ້ກໍຍັງສືບທອດກັນຕໍ່ໆມາ ທີ່ນຳຢາພັງຟອນມາປະຖົມພະຍາບານໃນການຮັກສາບາດແຜຫຼືຫ້າມເລືອດແລະອື່ນໆ.

## ວິທີການນຳໃຊ້ຢາພັງຟອນ

ເວລາມີດຫລືພ້າບາດມື ມີເລືອດອອກເຮົາກໍນຳເອົາຢາພັງຟອນມາທຸບໃຫ້ລະອຽດ.ແລ້ວນຳມາແປະໃສ່ບາດແລ້ວນຳເອົາຜ້າຮຳໄວ້ປະມານ 2-4 ຊົ່ວໂມງ.ແລ້ວຈຶ່ງປ່ຽນເອົາອັນໃໝ່ມາໃສ່ເຮັດແບບນີ້ໄປເລື້ອຍໆຈົນກວ່າບາດແຜຈະແຫ້ງດີ.

PDF created with pdfFactory Pro trial version www.pdffactory.com



## ຄຸນປະໂຫຍດຂອງຢາພັງພອນ

1. ໃຊ້ເປັນຢາຫ້າມເລືອດ
2. ໃຊ້ໃສ່ບາດແຜພາຍນອກ
3. ໃຊ້ໃສ່ບາດແຜໄຟໃໝ້
4. ໃຊ້ໃສ່ບາດແຜນ້ຳຮ້ອນລວກ.

PDF created with pdfFactory Pro trial version www.pdffactory.com



## ເພງ: ພັງຟອນ

ໃບຢາພັງຟອນນີ້ ນັ້ນ…ມີມາຕັ້ງແຕ່
ຄົນເຖົ້າ…ຄົນແກ່ ຮູ້ແຕ່…ດຶກດຳບັນ
ສິ່ງທີ່ສຳຄັນ ນັ້ນມັນຄືຕົວຢາ(ຊ້ຳ)
ພວກເຮົານຳມາ ໄວ້ທຸບ..ທາບາດແຜ

## ພາບ: ຢາພັງຟອນ

PDF created with pdfFactory Pro trial version www.pdffactory.com

ຢາພັງຟອນ ເປັນສະໝຸນໄພ
ນຳເອົາໄປ ປົວບາດແຜ
ໃຊ້ມາແຕ່ ປູ່ຍ່າຕາຍາຍ
ມັນໄດ້ກາຍ ເປັນຢາດີເລີດ

## ເຊີ້ງ: ຢາພັງຟອນ

ມາພວກເຮົາມາ ມາຟັງເລື່ອງກ່າວ
ເຮົາເປັນຊາວລາວ ຢ່າຟ້າວຫຸນຫັນ
ທຸກຄົນພາກັນ ຫັນມາຟັງກ່ອນ
ມັນຄືຄຳສອນ ທຸກຄົນຄວນຮູ້
ມາແຕ່ລຸ້ນປູ່ ຈົນຮອດລຸ້ນຫລານ
ມັນຄືຕຳນານ ງານແພດພື້ນບ້ານ
ທຸກໆເຂດຍ່ານ ບ່ອນໃດກໍມີ
ປູກໄດ້ທຸກທີ່ ຄືຢາພັງຟອນ

## ລຳ: ຢາພັງຟອນ (ລຳພູໄທ)

PDF created with pdfFactory Pro trial version www.pdffactory.com

ໂອນໍ...........................ທ່ານເອີຍ.

ບັດນີ້:   ເຮົາຈະຂໍກ່າວເວົ້າ   ເລື່ອງຢາເກົ່າພື້ນເມືອງລາວ
ເປັນຕຳລາຢາປົວ   ໝູ່ຝູງໂລຄາຮ້າຍ
ບັດນີ້   ຍັງມີຫລາຍຝູງໄມ້   ສະໝຸນໄພຫລາຍຢ່າງ
ເພິ່ນໄດ້ພາຊອກຄົ້ນ   ໄດ້ຫລາຍລົ້ນພວກໝູ່ຢາ ລະນາ
ຟັງເດີ   ໃບພັງພອນວ່ານັ້ນ   ເປັນຢາໜຶ່ງໃນຕຳລາ
ໃນຈຳນວນຝູງຢາ   ທີ່ພວກເຮົາຫາໄດ້
ນາງເອີຍ   ໃຫ້ເຈົ້ານຳມາໃຊ້   ໃນເວລາທີ່ມີບາດ
ໃຫ້ເຈົ້າຈົດຈື່ໄວ້   ຢ່າໄລຖິ້ມແມ່ນຊື່ຢາ...ແທ້ເນີ
ໂອນໍ   ພໍມາເຖິງບ່ອນນັ້ນ   ລຳພູໄທຊິລາກ່ອນ
ບາດວ່າຕອນເທື່ອໜ້າ   ຈະລຳທ່ານຟັງແທ້ນາ
ລາແລ້ວ  ລາແລ້ວ

## ຮູ້ແລະປະຫວັດຂອງຜູ້ຂຽນ

PDF created with pdfFactory Pro trial version www.pdffactory.com



ຊື່ ທ້າວ ເກດ

ນາມສະກຸນ ພົມມະຫາໄຊ

ອາຍຸ 34 ປີ

ອາຊີບ ເຮັດນາ

## <u>ເປັນຫຍັງຈຶ່ງຢາກຂຽນຫົວຂໍ້ນີ້</u>

ຍ້ອນຢາກໃຫ້ຮຸ່ນນ້ອຍເຍົາວະຊົນໃຫ້ຮູ້ກ່ຽວກັບຢາພັງພອນເຊັ່ນເປັນຢາພື້ນບ້ານທີ່ຫາໄດ້ງ່າຍເວົ້າສະເພາະຕົວຢ່າງແລະຍັງສາມາດໃຊ້ຫ້າມເລືອດອີກດ້ວຍໃຫ້ຮູ້ເລື່ອງສະໝຸນໄພຂອງທ້ອງຖິ່ນເຮົາເຊິ່ງເປັນພູມປັນຍາໃຫ້ສືບທອດຕໍ່ໄປ

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com